# ການປູກຝັງຈິດສຳນຶກກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ບ້ານຜາຫຼວງ ເມືອງເຟືອງ ແຂວງວຽງຈັນ



ຂຽນໂດຍ: ທີມງານອາສາສະໝັກຈາກ ຄະນະນິຕິສາດ ແລະ ລັດຖະສາດ, ມຊ
ນາງ ມະນີລາ ທອງຟ່າງຫວັງກີ
ທ້າວ ໄຊຍະວົງເຮີ ຈືໄຊ
ນາງ ປາວີນາ ແກ້ວບຸລົມ
ທ້າວ ສີສຸມັງ ເຮີ
ກວດແກ້ໂດຍ: ເພັດດາວັນ ສີປະເສີດ ແລະ ເລນາ ວິໄລເພັດ (ໂຄງການໄລຟ໌)

ເດືອນພະຈິກ **2024**

## 1. ຄວາມເປັນມາ





ບ້ານ ຜາຫຼວງ ເມືອງເຟືອງ ແຂວງວຽງຈັນ

ບ້ານຜາຫຼວງ  ເປັນບ້ານໜຶ່ງທີ່ຕັ້ງຢູ່ເມືອງເຟືອງ ແຂວງ ວຽງຈັນ, ຂຶ້ນກັບຈຸດສຸມພັດທະນາຜາສັງ. ປະຊາຊົນໃນບ້ານ ສ່ວນຫຼາຍເປັນຊົນເຜົ່າມົ້ງ ແລະ ພາສາທີ່ໃຊ້ແມ່ນພາສາມົ້ງເປັນຫຼັກ, ນັບຖືບັນພະບຸລຸດເປັນຫຼັກ,ການດໍາລົງຊີວິດຂອງຊາວບ້ານແມ່ນການເຂົ້າປ່າຫາອາຫານ, ເຄື່ອງປ່າຂອງດົງ ແລະ ການເຮັດກະສິກໍາ. ພູມສັນຖານຂອງ ບ້ານເປັນທົ່ງພຽງເໝາະແກ່ການປູກຝັງລ້ຽງສັດເຊັ່ນ: ຄວາຍ, ງົວ, ແບ້, ໝູ, ສັດປີກ, ຢາງພາລາ, ເຂົ້າ ແລະ ພືດຜັກເພື່ອເປັນສິ້ນຄ້າ.



**ແຜນທີ່ເມືອງເຟືອງ ແຂວງວຽງຈັນ**

## ກ. ຂໍ້ມູນດ້ານປະຊາກອນ ແລະ ປ່າໄມ້:

| ລ/ດ | ລາຍລະອຽດ | ຈໍານວນ |
|---|---|---|
| 1 | ປະຊາກອນ | 1.293 ຄົນ, ຍິງ 653 ຄົນ |
| 2 | ຫຼັງຄາເຮືອນ | 188 ຫຼັງຄາເຮືອນ |
| 3 | ຄອບຄົວ | 218 ຄອບຄົວ |
| 4 | ອາຊີບຕົ້ນຕໍ | ເຮັດສວນ 60% |
| 5 | ອາຊີບສໍາຮອງ | ລ້ຽງສັດ |
| 6 | ຊົນເຜົ່າ | ຊົນເຜົ່າມົ້ງ 99% |
| 7 | ເນື້ອທີ່ທັງໝົດຂອງບ້ານ | 445 ເຮັກຕາ |
| 8 | ເນື້ອທີ່ປ່າໄມ້ | 434 ເຮັກຕາ |

## 1. ການປະເມີນກໍລະນີສຶກສາ\ ຫຼື ບັນຫາ\ປະເດັນ

1) ບັນຫາການນໍາໃຊ້ທີ່ດິນ: ຂໍ້ຂັດແຍ້ງເລື່ອງທີ່ດິນເກີດພາຍໃນບ້ານ ແມ່ນຊາຍແດນລະຫ່ວາງບ້ານຕໍ່ບ້ານ ແລະ ບຸກຄົນ ກັບ ບຸກຄົນ.
2) ບັນຫາການປົກປັກຮັກສາແຫ່ງນໍ້າ ແລະ ຊັບພະຍາກອນນໍ້າ: ໄດ້ມີຊາວບ້ານຄົນໜຶ່ງເລົ່າກ່ຽວກັບບັນຫາມີການບຸກເບີກທົ່ວໄປ, ຖາງປ່າຕົ້ນນໍ້າເຮັດໄຮ່ໂດຍບໍ່ຄໍານຶງເຖິງຜົນຕາມມາ ເຮັດໃຫ້ປະຊາຊົນພາຍໃນບ້ານບໍ່ມີນໍ້າພຽງພໍເຂົ້າໃນການເຮັດກະສິກໍາ.
3) ບັນຫາການສືບທອດມູນມໍລະດົກ: ປັດຈຸບັນ ປະຊາຊົນສ່ວນຫຼາຍແມ່ນນໍາໃຊ້ດິນຜ່ານການສືບທອດມາແຕ່ລຸ້ນພໍ່ແມ່, ພໍ່ເຖົ້າແມ່ເຖົ້າ ສູ່ລຸ້ນລູກຫຼານ. ບັນຫາຍາດມູນຂອງພໍ່ແມ່ເສຍຊີວິດໝົດແຕ່ພໍ່ແມ່ຍັງບໍ່ແບ່ງມູນໃຫ້ລະອຽດ ແລະ ບາງເທື່ອພໍ່ແມ່ແບ່ງມູນບໍ່ເທົ່າກັນ ເຮັດໃຫ້ບໍ່ພໍໃຈ ແລະ ມີການຍາດແຍ້ງທີ່ດິນນາ, ສວນ ແລະ ດິນເຮືອນຂອງພໍ່ແມ່.
4) ບັນຫາການມີສ່ວນຮ່ວມຍິງ-ຊາຍໃນທີ່ປະຊຸມ: ແມ່ຍິງພາຍໃນບ້ານທີ່ຢູ່ຊົນນະບົດ ຍັງບໍ່ທັນເຂົ້າໃຈກ່ຽວກັບພາລະບົດບາດຂອງ ຍິງ-ຊາຍ ສ່ວນຫຼາຍຈະນັບຖືຮີດຄອງປະເພນີ. ພະນັກງານຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ ເພືອງ ໄດ້ໃຫ້ຂໍ້ມູນຕື່ມວ່າ: "ຜູ້ຊາຍຈະເປັນຫົວໜ້າຄອບຄົວ ຖ້າມີກອງປະຊຸມບ້ານສ່ວນຫຼາຍຈະໃຫ້ຜູ້ຊາຍເປັນຜູ້ໄປເຂົ້າຮ່ວມມີຫຍັງຈຶ່ງມາບອກໃຫ້ຜູ້ເປັນເມຍໃຫ້ຮັບຮູ້.

## 2. ວິທີການ

- ວິທີການຄັ້ງທໍາອິດພວກເຮົາໄດ້ລົງເຮັດກິດຈະກໍາແຜນວາດສາຍນໍ້າ ໂດຍຜ່ານກິດຈະກໍາການແຕ້ມຮູບ ແລະ ການນໍາສະເໜີຮູບແຕ້ມ ໂດຍການເຮັດວຽກເປັນກຸ່ມ ແລະ ຫຼັງຈາກນັ້ນທາງທີມອາສາສະໝັກເກັບກໍາເອົາບັນຫາດັ່ງກ່າວມາຄົ້ນຄ້ວາກັບທາງໂຄງການ ເພື່ອນໍາເອົາກົດໝາຍທີ່ສອດຄ່ອງກັບບັນຫາດັ່ງກ່າວໄປເປັນເຄື່ອງມືຊ່ວຍແກ້ໄຂໃຫ້ຊາວບ້ານ.
- ການລົງເຮັດກິດຈະກໍາໃນຄັ້ງທີ 2 ແລະ ຄັ້ງທີ 3 ໄດ້ນໍາໃຊ້ກິດຈະກໍາຜ່ອນຄາຍ ແລະ ພວກເຮົາຍັງໄດ້ໃຊ້ໂພດສເຕີກົດໝາຍໃນການອະທິບາຍ, ວີດີໂອກົດໝາຍເຊັ່ນ: ວີດີໂອສິດການນໍາທີ່ດິນຕາມປະເພນີ, ຂັ້ນຕອນການອອກໃບຕາດິນ, ມໍລະດົກພໍ່, ສິດສະເໝີພາບການສືບທອດມູນມໍລະດົກຂອງລູກທຸກຄົນ ແລະ ວີດີໂອການມີສ່ວນຮ່ວມຂອງຍິງ-ຊາຍໃນການມີສ່ວນຮ່ວມໃນວຽກງານພັດທະນາ.



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

- ນອກຈາກນີ້ ພວກເຮົາກໍຍັງໄດ້ໃຊ້ວິທີການ ການເຂົ້າເຖິງ ແມ່ຍິງ ເປັນຕົ້ນໄດ້ແບ່ງທີມອາສາສະໝັກ ທີ່ສາມາດເວົ້າພາສາຊົນເຜົ່າ ແລະ ອາສາສະໝັກຍິງ ເຂົ້າໄປຕິດຕາມ ນໍາກຸ່ມແມ່ຍິງ ແລະ ກະຕຸ້ນໃຫ້ເຂົາເຈົ້າມີສ່ວນຮ່ວມນໍາກິດຈະກໍາເຊັ່ນ: ການຖາມຕອບໃນຫົວຂໍ້ການສ່ວນຮ່ວມຂອງແມ່ຍິງໃນເວລາສາຍວີດີໂອ.

**ມາດຕາກົດໝາຍທີ່ນໍາເອົາໄປເຜີຍແຜ່ຄັ້ງທີ່ 2 ແລະ 3**



- ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 19
  ມາດຕາ 130 ການໄດ້ສິດນໍາໃຊ້ທີ່ດິນຕາມປະເພນີ
- ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ , ສະບັບເລກທີ່ 23 /ສພຊ, ລົງວັນທີ່11 ພຶດສະພາ
- ມາດຕາກົດໝາຍ: 56 ການບູລະນະຟື້ນຟູນໍ້າ ແລະ ຊັບພະຍາກອນນໍ້າ
- ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ່ 21 ມິຖຸນາ 19
  ມາດຕາ 161 (ປັບປຸງ) ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ

**ກົດໝາຍທີ່ນໍາເອົາເຜີຍແຜ່ຄັ້ງທີ່ 3**

- ລັດຖະທໍາມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸ່ງມີ 2015)
- ຄວາມສະເໝີພາບລະຫ່ວາງຍິງ-ຊາຍ
  ມາດຕາ 37: ສິດສະເໝີພາບ ໃນການສືບທອດມູນມໍລະດົກຂອງລູກທຸກຄົນ
- ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ,ເລກທີ່ 77/ສພຊ, ລົງວັນທີ 28 ພະຈິກ 2019
  ມາດຕາ 18 ຄວາມສະເໝີພາບກ່ຽວກັບສາຍພົວພັນຄອບຄົວ
- ປະມວນກົດໝາຍແພ່ງ, ເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018
  ມາດຕາ 574 ຜູ້ສືບທອດມູນມໍລະດົກຕາມກົດໝາຍຂໍ້ 1-2
  ມາດຕາ 576 ການແບ່ງປັນມູນມໍລະດົກລະຫ່ວາງຜົວ ຫຼື ເມຍທີ່ຍັງມີຊີວິດຢູ່ ແລະ ລູກ
- ການສືບທອດມູນມໍລະດົກກ່ຽວກັບທີ່ດິນ
- ປະມວນກົດໝາຍແພ່ງສະບັບທີ 55 ສພຊ, ລົງວັນທີ 6 ທັນວາ 2018
  ມາດຕາ 565 ມູນມໍລະດົກ
  ມາດຕາ 566 ການສືບມູນມໍລະດົກ
  ມາກຕາ 574 ຜູ້ສືບທອດມູນມໍລະດົກຕາມກົດໝາຍ
  ມາດຕາ 590 ພິໄນກໍາ
- ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸ່ງ) ສະບັບເລກທີ 70/ສພຊ, ລົງວັນທີ່ 21 ມິຖຸນາ 2019
  ມາດຕາ 129 (ໃໝ່) ການສືບທອດມູນມໍລະດົກ


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

*ຮູບພາບຂອງການປະຕິບັດກິດຈະກໍາທັງໝົດ 3 ຄັ້ງ*



*ກິດຈະກໍາເກັບກໍາແຜນອາດສາຍນໍ້າຄັ້ງທີ່ 1*





*ກິດຈະກໍາຄັ້ງທີ່ 2: ການລົງໃຫ້ຄວາມຮູ້ກົດໝາຍ*





## 4. ຜົນໄດ້ຮັບຈາກການເກັບກໍາຂໍ້ມູນ

ກ. ຜົນໄດ້ຮັບຂັ້ນບ້ານ ແລະ ເມືອງ

ການປູກຈິດສໍານຶກເລື່ອງກົດໝາຍທີ່ກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ເຮັດໃຫ້ຊາວບ້ານເຂົ້າໃຈກ່ຽວກັບກົດໝາຍ ທີ່ກ່ຽວພັນກັບບັນຫາທີ່ເກີດຂຶ້ນຢູ່ພາຍໃນບ້ານທີ່ຊາວບ້ານຕ້ອງການຮຽນຮູ້ ແລະ ເຊື່ອມຊຶມກັບບັນດາກົດໝາຍໃຫ້ຫຼາຍຂຶ້ນ ເພາະຈະເປັນແນວທາງໃຫ້ຊາວບ້ານແກ້ໄຂບັນຫາພາຍໃນບ້ານ ແລະ ໄດ້ຝຶກອົບຮົມໃຫ້ຊາວບ້ານໄດ້ຮຽນຮູ້ກົດໝາຍ ນອກຈາກນີ້ ຜູ້ຊາຍ ແລະ ແມ່ຍິງທີ່ຈື່ບົດຮຽນຈາກການປະຊຸມໄດ້ເລົ່າຕໍ່ໃຫ້ຊາວບ້ານຜູ້ອື່ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ເພື່ອໃຫ້ເຂົາເຈົ້າສາມາດນໍາເອົາບົດຮຽນ ແລະ ວິທີການດັ່ງກ່າວນໍາໄປໃຊ້ໄດ້ໃນຊີວິດປະຈໍາວັນໃຫ້ເກີດໝາກຜົນ. ເຊິ່ງທາງພາກລັດໄດ້ໃຫ້ຄວາມຄິດເຫັນວ່າໂຄງການໄລຟ໌ ຈັດກິດຈະກໍາເປັນວິທີການທີ່ບໍ່ເຄີຍຝຶກມາກ່ອນ ແລະ ເປັນການໃຫ້ຄວາມຮູ້ພື້ນຖານກົດໝາຍໃຫ້ກັບຊາວບ້ານອີກດ້ວຍ ເຊິ່ງໄດ້ມີຜູ້ເຂົ້າຮ່ວມ 3 ທ່ານເຂົ້າຮ່ວມກິດຈະກໍາໄດ້ກ່າວວ່າ: "ການເຂົ້າຮ່ວມກິດຈະກໍາ


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ເຜີຍແຜ່ກົດໝາຍຄັ້ງນີ້ ແມ່ນມີຄວາມສຳຄັນຫຼາຍ ແລະ ແມ່ຍິງກໍສາມາດ ເຂົ້າຮ່ວມໄດ້, ອາສາສະໝັກນຳພາຫຼິ້ນເກມຕ່າງໆ ທີ່ບໍ່ເຄີຍເຫັນ ບໍ່ເຄີຍຫຼິ້ນມາກ່ອນ ແລະ ບໍ່ເຄີຍຮຽນຮູ້ກົດໝາຍເລີຍ ຄັ້ງນີ້ເປັນຄັ້ງທຳອິດທີ່ໄດ້ມາຮຽນຮູ້ ແລະ ເຂົ້າຮ່ວມກິດຈະກຳແບບນີ້".

### *ກິດຈະກຳຄັ້ງທີ່ 3: ການລົງໃຫ້ຄວາມຮູ້ກ່ຽວກັບກົດໝາຍ*

 

ພະນັກງານເມືອງກໍໄດ້ໃຫ້ສຳພາດວ່າ: ປະຊາຊົນໄດ້ມີຄວາມເຂົ້າຕໍ່ກັບການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແລະ ວິທີການປົກປັກຮັກສານຳໃຊ້ທີ່ດິນຂອງຕົນ ແລະ ເຂົ້າໃຈກ່ຽວກັບການໄດ້ຮັບໃບຕາດິນ ຊາວບ້ານຕ້ອງໄດ້ຈ່າຍພາສີອາກອນໃຫ້ກັບລັດຕາມທີ່ໄດ້ກຳນົດໃນກົດໝາຍ, ຖ້າຫາກໄດ້ສິດນຳໃຊ້ທີ່ດິນແລ້ວ ຄວນນຳເອົາທີ່ດິນຂອງຕົນໄປອອກໃບຕາດິນ. ບົດຮຽນຈາກກິດຈະກຳ ຍັງເປັນປະໂຫຍດໃຫ້ກັບຊາວບ້ານໃນການແກ້ໄຂຂໍ້ຂັດແຍ່ງພາຍໃນບ້ານ ແລະ ເຮັດໃຫ້ບ້ານມີຄວາມລະບຽບຮຽບຮ້ອຍ ແລະ ເຂົ້າໃຈກົດລະບຽບຫຼາຍຂຶ້ນ. ພະນັກງານຈາກຫ້ອງການຍຸຕິທຳເມືອງຍັງໄດ້ກ່າວຕື່ມວ່າ: "ມີຄວາມພູມໃຈຫຼາຍທີ່ທີມອາສາສະໝັກນຳເອົາຄວາມຮູ້ມາແບ່ງປັນໃຫ້ປະຊາຊົນຜູ້ທີ່ຍັງບໍທັນເຂົ້າໃຈກ່ຽວກັບກົດໝາຍ ແລະ ຍັງບໍ່ທັນມີໂຄງການແບບນີ້ເຂົ້າມາບ້ານຂອງພວກເຮົາມາກ່ອນ ເຊິ່ງສ່ວນຫຼາຍກໍມີແຕ່ທາງຫ້ອງການຍຸຕິທຳເມືອງລົງມາເຜີຍແຜ່ ໃຊ້ແຕ່ງົບປະມານຂອງລັດເທົ່ານັ້ນ ແຕ່ການເຜີຍແຜ່ບໍ່ທັນທົ່ວເຖິງ, ຖ້າຫາກມີໂອກາດກໍຢາກໃຫ້ທາງໂຄງການ LIFE ມາເຜີຍແຜ່ອີກ".

ນອກຈາກນັ້ນ, ປະຊາຊົນພາຍໃນບ້ານກໍໄດ້ໃຫ້ຂໍ້ຄິດເຫັນກ່ຽວກັບຜົນໄດ້ຮັບຂອງໂຄງການດັ່ງຕໍ່ໄປນີ້: ທ່ານຮອງນາຍບ້ານໄດ້ຢືນຢັນກ່ຽວກັບຜົນໄດ້ຮັບຂອງໂຄງການດັ່ງນີ້: "ສຳລັບກິດຈະກຳຄັ້ງທີ່ 3 ນີ້ມີຄວາມສຳຄັນໃຫ້ກັບປະຊາຊົນທຸກຄົນຍ້ອນບ້ານຍັງມີບັນຫາກ່ຽວກັບເລື່ອງມູນມໍລະດົກ ແລະ ຂໍ້ຂັດແຍ່ງທີ່ດິນລະຫວ່າງຊາວບ້ານກັບບໍລິສັດໃນການບຸກເບີກທີ່ດິນສວນ. ຜົນໄດ້ຮັບທີ່ສຳຄັນອີກຢ່າງ ໜຶ່ງແມ່ນ ບ້ານມີຄວາມເພິ່ງພໍໃຈທີ່ສຸດຕໍ່ກິດຈະກຳ ທີ່ໂຄງການນີ້ໄດ້ນຳເອົາຄວາມຮູ້ພື້ນຖານກົດໝາຍມາເຜີຍແຜ່ໃຫ້ປະຊາຊົນສາມາດເອົາມານຳໃນຊີວິດຕົວຈິງໄດ້ຢ່າງຖືກຕ້ອງ".

ປະຊາຊົນທີ່ໄດ້ເຂົ້າຮ່ວມກິດຈະກຳບາງຄົນໄດ້ນຳເອົາຄວາມຮູ້ໄປເຜີຍແຜ່ໃຫ້ຄົນໃນຄອບຄົວເຊັ່ນ: "ຂ້າພະເຈົ້າເອງກໍ່ໄດ້ນຳເອົາຄວາມຮູ້ກ່ຽວກັບກົດໝາຍການມີສ່ວນຮ່ວມເວົ້າສູ່ເມຍຂອງຂ້າພະເຈົ້າຟັງຜ່ານການເຂົ້າຮ່ວມກິດຈະກຳນີ້ຮູ້ສຶກເຂົ້າໃຈຫຼາຍກ່ຽວກັບກົດໝາຍເຂົ້າໃຈໃນຫົວຂໍ້ຂອງມູນມໍລະດົກ ແລະ ຜົວເມຍມີສິດໃນການມີສ່ວນຮ່ວມຖ້າຫາກມີບັນຫາເຫຼົ່ານີ້ເກີດຂຶ້ນຈະໄດ້ມີວິທີແກ້ໄຂທີ່ຖືກຕ້ອງ ແລະ ເຂົ້າໃຈກັນ" ຄຳເວົ້າຂອງ ທ່ານ ເຊຍປີ ເຮີ ປະຊາຊົນບ້ານຜາຫຼວງ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

**ຜົນໄດ້ຮັບຂອງອາສາສະໝັກ**

- ພວກເຮົາໄດ້ຮຽນຮູ້ເຖິງບັນຫາທີ່ເກີດຂຶ້ນໃນຊຸມຊົນ ແລະ ວິທີແກ້ໄຂບັນຫາຂອງພາຍໃນຂອງຊາວບ້ານ.
- ການເຮັດວຽກເປັນທີມໄດ້ດີ, ການແບ່ງຫນ້າທີ່ການເຮັດວຽກ, ການຮຽນຮູ້ກ່ຽວກັບກົດໝາຍກ່ຽວກັບທີ່ດິນ, ທັກສະການເວົ້າ, ທັກສະການເປັນຜູ້ອຳນວຍຄວາມສະດວກໃນການປະສານງານກັບອົງການທ້ອງຖິ່ນຂັ້ນເມືອງ ແລະ ຂັ້ນບ້ານ, ການນຳໃຊ້ເຄື່ອງມືສື່ສານ, ການແລກປ່ຽນບົດຮຽນຕົວຈິງຈາກການເຮັດວຽກຢູ່ຂັ້ນບ້ານ, ການສະແດງຄວາມຄິດເຫັນ, ການຊ່ວຍເຫຼືອກັນພາຍໃນທີມ ແລະ ທີ່ສຳຄັນເພີ່ມທັກສະການເປັນຜູ້ອຳນວຍຄວາມສະດວກອີກດ້ວຍ.
- ພວກນ້ອງເອງໃນນາມເປັນອາສາສະໝັກຂອງໂຄງການໄລຟ໌ ເປັນໂຄງການໃຫ້ຄວາມຮູ້ຫຼາກຫຼາຍ ເຊິ່ງຢູ່ໂຮງຮຽນນັ້ນບໍ່ມີສອນເລີຍ ແລະ ສິ່ງທີ່ນ້ອງໄດ້ຮຽນມາມີທັກສະການເວົ້າ, ການສະແຫວງຫາຄວາມຮູ້ໃໝ່ໆ ແລະ ການໄດ້ເຮັດວຽກກັບຊຸ່ມຊົນຕົວຈິງ. ທັກສະເຫຼົ່ານີ້ ສາມາດເອົາມານຳໃຊ້ໄດ້ຈິງ ເພື່ອສ້າງຜົນປະໂຫຍດໃຫ້ກັບຊຸມຊົນ ແລະ ອະນາຄົດຂອງພວກນ້ອງເອງ.

## 5.ສະຫຼຸບ \ ບົດຮຽນທີ່ຖອດຖອນໄດ້

➢ **ຈຸດດີ**

ສັງລວມຜົນໄດ້ຮັບຂອງການລົງບ້ານທັງໝົດ 3 ຄັ້ງນີ້ໄດ້ໄປຮຽນຮູ້ຫຼາຍຢ່າງຈາກປະຊາຊົນໃນການດຳລົງຊີວິດຂອງຊາວບ້ານ, ການທຳມາຫາກິນ ແລະ ວິທີແກ້ ໄຂບັນຫາຂອງຊາວບ້ານໃນກໍລະນີເກີດມີຂໍ້ຂັດແຍ້ງພາຍໃນບ້ານ ຊາວບ້ານມີວິທີແກ້ໄຂພາຍໃຫ້ບ້ານເຊັ່ນ: ແກ້ໄຂດ້ວຍຮູບແບບການປະນີປະນອມກັນ ຫຼື ໄກ່ເກ່ຍກັນພາຍໃນບ້ານເອງ. ພວກເຮົາໃຊ້ຮູບແບບການເຮັດກິດຈະກຳວິດີໂອ,ໂພດເຕີ ເຊິ່ງເຮັດໃຫ້ປະຊາຊົນມີຄວາມສົນໃຈ, ເຂົ້າໃຈກົດໝາຍໄດ້ງ່າຍຂຶ້ນ ພະນັກງານເມືອງມັກໃນຮູບແບບຂອງການເຮັດກິດຈະກຳຂອງພວກເຮົາອີກດ້ວຍເຊັ່ນ:

ກ. ທ່ານ ໂຄເຄນ ອິນສຸວັນ ພະນັກງານຫ້ອງການຍຸຕິທຳເມືອງເຟືອງໄດ້ກ່າວເຖິງສິ່ງທີ່ປະທັບໃຈທີ່ສຸດ ແມ່ນສາມາດນຳໃຊ້ພາສາຊົນເຜົ່າມາອະທິບາຍ, ໂພສເຕີ ແລະ ວິດີໂອ ເຮັດໃຫ້ຊາວບ້ານເຂົ້າໃຈກົດໝາຍຫຼາຍຂຶ້ນ.

ຂ. ນາງ ຢົວເລົ່າ ອາຊີບ ຊາວນາ ເພິ່ນເອງໄດ້ກ່າວເຖິງຮູບແບບກິດຈະກຳທີ່ຕົນເອງມັກທີ່ສຸດຄື: "ແມ່ເອງມີຄວາມເພິ່ງພໍໃຈຫຼາຍສຳລັບກິດຈະກຳນີ້ ໂດຍສະເພາະແມ່ນ ວິດີໂອ, ການແລກປ່ຽນຄວາມຮູ້, ການແຕ້ມຮູບຖ້າຫາກມີໂຄງການແບບນີ້ມາອີກແມ່ເອງກໍ່ເຂົ້າຮ່ວມ ແລະ ຊັກຊວນໝູ່ເພື່ອນມາຮ່ວມກອງປະຊຸມນຳກັນ".

➢ **ສິ່ງທ້າທາຍ**

ການເຂົ້າຫາຊາວບ້ານມີຄວາມຫຍຸ້ງຍາກຫຼາຍເຊັ່ນ:ໄວໜຸ່ມ, ແມ່ຍິງພາຍໃນບ້ານເຂົ້າຮ່ວມຍາກຫຼາຍເນື່ອງຈາກແມ່ຍິງພາຍໃນບ້ານເປັນຄົນຊົນເຜົ່າ ແລະ ບໍ່ມັກໃນການເຂົ້າສັງຄົມ ຍ້ອນວ່າແມ່ຍິງບໍ່ໄດ້ພາສາລາວ ແລະ ແມ່ຍິງຍັງນັບຖືຮີດຄອງປະເພນີຫຼາຍ ເຊິ່ງແມ່ຍິງຕ້ອງຢູ່ເຮືອນແຕ່ງກິນ ແລະ ເອົາລູກ ໂດຍໃຫ້ຜູ້ເປັນຜົວເຂົ້າຮ່ວມກອງປະຊຸມ. ພາຍຫຼັງການເຂົ້າຮ່ວມຄັ້ງທີ 2 ສັງເກດເຫັນໄດ້ວ່າ ຜູ້ຍິງ ສ່ວນໃຫ່ຍແມ່ນບໍ່ຄ່ອຍມີສ່ວນຮ່ວມໃນການເຂົ້າຮ່ວມກອງປະຊຸມ ແລະ ມີຄຳຄິດເຫັນ ຈຶ່ງໄດ້ມີການເອົາຫົວຂໍ້ ການມີສ່ວນຮ່ວມຂອງແມ່ຍິງ ໃນວຽກງານພັດທະນາເຂົ້າໄປເຜີຍແຜ່ໃຫ້ຄວາມຮູ້.



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org